

# “ການສ້າງຄືນໃຫ້ດີກວ່າເກົ່າ” ການຫັນປ່ຽນຂອງອາຊີຕາເວັນອອກສ່ຽງໃຕ້ໄປສູ່ເສດຖະກິດສີຂຽວພາຍຫຼັງໝົດພະຍາດອັກເສບປອດສາຍພັນໃໝ່ (COVID-19)

## ການປະເມີນ ແລະ ບາງຂໍ້ສະເໜີແນະນຳສຳລັບສະມາຊິກສະພາ

APHR ASEAN PARLIAMENTARIANS FOR HUMAN RIGHTS

Hanns Seidel Foundation

# ສະຫລຸບໂດຍຫຍໍ້

ການແຜ່ລະບາດຂອງພະຍາດ ໂຄວິດ-໑໙ ແລະ ການຖົດຖອຍທາງດ້ານເສດຖະກິດທີ່ຕາມມາ ແມ່ນໄດ້ເຮັດໃຫ້ເຫັນເຖິງຄວາມລົ້ມເຫຼວ ແລະ ຄວາມບອບບາງຂອງລະບົບເສດຖະກິດຂອງພວກເຮົາໃນປັດຈຸບັນ, ເຊິ່ງໄດ້ໃຫ້ຄວາມສໍາຄັນກັບຜົນປະໂຫຍດທາງດ້ານເສດຖະກິດຫຼາຍກວ່າຄວາມຢູ່ດີກິນດີຂອງປະຊາຊົນ ແລະ ສິ່ງແວດລ້ອມ, ຄວາມບໍ່ສະເໝີພາບຢ່າງຮຸນແຮງ ແລະ ຄວາມລົ້ມເຫຼວໃນການປົກປ້ອງຜູ້ທີ່ມີຄວາມຄວາມສ່ຽງຫຼາຍທີ່ສຸດ.

ໃນຂະນະທີ່ບັນດາປະເທດໃນເຂດອາຊີຕາເວັນອອກສ່ຽງໃຕ້ ພວມໃຊ້ມາດຕະການເພື່ອຟື້ນຟູຈາກການຖົດຖອຍທາງດ້ານເສດຖະກິດຈາກແຜ່ລະບາດຂອງພະຍາດ ໂຄວິດ ໑໙, ລວມເຖິງນະໂຍບາຍເພື່ອກະຕຸ້ນເສດຖະກິດຂອງຕົນ, ປັດຈຸບັນຖືເປັນໂອກາດທີ່ເໝາະສົມທີ່ຈະແຍກຕົວການການປະຕິບັດແບບເກົ່າ ແລະ ຫັນໄປສູ່ເສດຖະກິດທີ່ຍຸຕິທໍາ, ຍືນຍົງ ແລະ ຢືດຢຸ່ນໄດ້ ເຊິ່ງສາມາດປົກປ້ອງສິດທິມະນຸດຂອງທຸກຄົນໄດ້.

ການຫັນໄປສູ່ເສດຖະກິດສີຂຽວ (ເປັນມິດກັບສິ່ງແວດລ້ອມ) ເປັນສ່ວນໜຶ່ງຂອງຄວາມພະຍາຍາມ "ການສ້າງຄືນໃຫ້ດີກວ່າເກົ່າ" ທີ່ກວມເຖິງການປ່ຽນຈາກອຸດສາຫະກໍາທີ່ນໍາໃຊ້ນໍ້າມັນເຊື້ອໄຟ ແລະ ແທນທີ່ດ້ວຍການມຸ້ງສູ່ແຫຼ່ງພະລັງງານທີ່ສະອາດ ແລະ ສາມາດທົດແທນໄດ້ ເຊິ່ງເປັນສິ່ງທີ່ເຮັດໃຫ້ເກີດມົນລະພິດໜ້ອຍ ຫຼື ບໍ່ມີມົນລະພິດເລີຍ ພ້ອມຊ່ວຍຫຼຸດການປ່ອຍອາຍພິດເຮືອນແກ້ວ (GHG) ແລະ ພາວະໂລກຮ້ອນນໍາອີກ.

ເນື່ອງຈາກເປັນໜຶ່ງໃນພາກພື້ນທີ່ມີຄວາມສ່ຽງຫຼາຍທີ່ສຸດໃນໂລກ ຈາກການປ່ຽນແປງຂອງດິນຟ້າອາກາດ, ອາຊີຕາເວັນອອກສ່ຽງ ໃຕ້ມີຫຼາຍຢ່າງທີ່ຈະໄດ້ຮັບຜົນປະໂຫຍດຢ່າງໃຫຍ່ຫຼວງ ຈາກການນໍາເອົາທິດສະດີການຟື້ນຟູເສດຖະກິດສີຂຽວຈາກໂຄວິດ ໑໙ ມາໃຊ້. ໃນກອບການຟື້ນຟູທີ່ສົມບູນແບບຂອງອາຊຽນ, ລັດຖະບານຂອງປະເທດໃນອາຊີຕາເວັນອອກສ່ຽງໃຕ້ຮັບຮູ້ວ່າ: "ການປ່ຽນ ແປງດິນຟ້າອາກາດເປັນຄວາມສ່ຽງຂັ້ນພື້ນຖານຂອງອາຊຽນ" ແລະ "ການກະທໍາເພື່ອຫຼຸດຜ່ອນຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດຄວນຈະດໍາເນີນທັນທີ"[1]

ແຜນຟື້ນຟູພະຍາດໂຄວິດ ໑໙ ສີຂຽວຊ່ວຍຫຼຸດຜ່ອນຜົນກະທົບຈາກການປ່ຽນແປງຂອງສະພາບດິນຟ້າອາກາດໄດ້. ນອກນັ້ນ, ມັນຍັງຊ່ວຍຫຼີກລ້ຽງການຫຼຸດລົງຂອງອັດຕາ GDP ຂອງອາຊຽນໄດ້ ໔໕%, ຫຼຸດຜ່ອນວິກິດໜີ້ສິນຂອງພາກພື້ນ, ຊ່ວຍສ້າງວຽກເຮັດງານທໍາໃນຂະແໜງການທີ່ເປັນມິດຕໍ່ສິ່ງແວດລ້ອມ; ແລະ ການແກ້ໄຂວິກິດດ້ານສິດທິມະນຸດທີ່ຮຸນແຮງ ອັນເກີດຈາກພະຍາດໂຄວິດ ໑໙ ແລະ ການປ່ຽນແປງຂອງດິນຟ້າອາກາດ

ເພື່ອຊ່ວຍໃຫ້ ສະມາຊິກສະພາຄວ້າໂອກາດນີ້ໄວ້, ສະມາຊິກລັດຖະສະພາອາຊຽນເພື່ອສິດທິມະນຸດ (APHR) ໄດ້ປະເມີນມາດຕະການຟື້ນຟູຢູ່ໃນປະເທດອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ສິງກະໂປ, ໄທ, ຕີມໍເລດເຕ ໃນລະຫວ່າງເດືອນກຸມພາ ໒໐໒໐ ເຖິງ ເດືອນເມສາ ໒໐໒໑. ການປະເມີນດັ່ງກ່າວແມ່ນຈັດຂຶ້ນເພື່ອກໍານົດວິທີປະຕິບັດທີ່ດີທີ່ສຸດທີ່ສະມາຊິກສະພາສາມາດນໍາໄປປັບໃຊ້ໃນປະເທດຂອງຕົນໄດ້ ລວມທັງບັນດາອຸປະສັກດ້ານໂຄງສ້າງທີ່ຕົນເອງຕ້ອງຜ່ານຜ່າ ເພື່ອສົ່ງເສີມການຫັນປ່ຽນໄປສູ່ເສດຖະກິດສີຂຽວ. ຈາກການປະເມີນດັ່ງກ່າວ, APHR ພົບວ່າມີການນໍາເອົາມາດຕະການນະໂຍບາຍສີຂຽວພຽງເລັກນ້ອຍມານໍາໃຊ້ເປັນສ່ວນໜຶ່ງຂອງແຜນຟື້ນຟູ ພະຍາດໂຄວິດ ໑໙ ແຫ່ງຊາດ. ນອກຈາກນັ້ນ, ມາດຕະການດ້ານດີບາງຢ່າງທີ່ໄດ້ຮັບການຮັບຮອງໄດ້ຖືກທໍາລາຍຢ່າງໜັກໜ່ວງ ໂດຍການຍອມຮັບຢ່າງກວ້າງຂວາງຂອງບັນດາສິ່ງທີ່ຈະນໍາໄປສູ່ພາວະໂລກຮ້ອນ ແລະ ສ້າງສິ່ງກີດຂວາງທີ່ສໍາຄັນຕໍ່ການຫັນປ່ຽນເສດຖະກິດທາດກາກບອນຕໍ່າ. ເຫັນໄດ້ວ່າບັນດາປະເທດໃນພາກພື້ນຂາດຍຸດທະສາດທີ່ເປັນເອກະພາບໃນການຟື້ນຟູສີຂຽວຈາກພະຍາດ ໂຄວິດ ໑໙.

1 ກອງເລຂາອາຊຽນ (ພະຈິກ 2020) ກອບການຟື້ນຟູແບບສົມບູນແບບຂອງອາຊຽນ. ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 37, ທີ່ ນະຄອນຫຼວງຮ່າໂນ້ຍ, ຫວຽດນາມ: ກອງເລຂາອາຊຽນ, ໜ້າທີ 38.

## ໃນບັນດານະໂຍບາຍຈໍານວນໜຶ່ງທີ່ເອື້ອອໍານວຍສໍາລັບການຫັນປ່ຽນເສດຖະກິດສີຂຽວ ປະກອບມີ:

- ເງິນອຸດໜູນ ແລະ ການຫຼຸດພາສີສໍາລັບຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ ເຊັ່ນ: ຢູ່ປະເທດອິນໂດເນເຊຍ ແລະ ປະເທດ ຟີລິບປິນ ລັດຖະບານໄດ້ຮັບຮອງເອົາການຫຼຸດອັດຕາພາສີສໍາລັບອຸດສາຫະກໍາ ແລະ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ໃຊ້ໂຄງການພະລັງງານທົດແທນ;
- ຂຶ້ນພາສີສໍາລັບສິນຄ້າທີ່ເປັນຕະລາຍຕໍ່ສິ່ງແວດລ້ອມເຊັ່ນ: ໃນປະເທດສິງກະໂປ ລັດຖະບານຄາດວ່າຈະເພີ່ມອັດຕາການເກັບພາສີນໍ້າມັນຂຶ້ນເປັນ 15% ຕໍ່ລິດ ເຊິ່ງເປັນສ່ວນໜຶ່ງຂອງເປົ້າໝາຍໄລຍະຍາວຂອງຕົນ ເພື່ອສະໜັບສະໜູນລົດໄຟຟ້າ;
- ການລົງທຶນໃສ່ພື້ນຖານໂຄງລ່າງການຂົນສົ່ງທີ່ສະອາດ ເຊັ່ນ: ລັດຖະບານຂອງປະເທດຟີລິບປິນໄດ້ຈັດສັນງົບປະມານເພື່ອພັດທະນາທາງຍ່າງທີ່ສາມາດເຂົ້າເຖິງໄດ້ ແລະ ທາງລົດຖີບທີ່ມີການປົກກັນ ພາຍໃຕ້ກົດໝາຍ Bayanihan ເພື່ອຟື້ນຟູໃຫ້ເປັນກົດໝາຍໜຶ່ງດຽວ (One Act) ທີ່ປະກາດໃຊ້ໃນເດືອນກັນຍາ 2020;
- ສິ່ງຈູງໃຈສໍາລັບລົດໄຟຟ້າ ເຊັ່ນ: ລັດຖະບານຂອງປະເທດສິງກະໂປໃຫ້ສ່ວນຫຼຸດຄ່າຈົດທະບຽນ ແລະ ອາກອນທາງຖະໜົນ (ຄ່າທາງ) ສໍາລັບເຈົ້າຂອງລົດໄຟຟ້າໃນໄລຍະການແຜ່ລະບາດ;
- ການລົງທຶນໃສ່ພື້ນຖານໂຄງລ່າງດ້ານພະລັງງານສະອາດ ດັ່ງທີ່ເຫັນຢູ່ໃນປະເທດ ອິນໂດເນເຊຍ, ມາເລເຊຍ ແລະ ສິງກະໂປ ທີ່ລັດຖະບານໄດ້ອອກມາດຕະການເພື່ອເລັ່ງການຜະລິດພະລັງງານສະອາດໂດຍການຊຸກຍູ້ການຕິດຕັ້ງແຜງພະລັງງານແສງອາທິດ (ໂຊລ້າເຊວ) ເທິງຊັ້ນດາດຟ້າ, ໄຟເຍືອງທາງ LED ແລະ ສາຍສົ່ງ;
- ການສະໜອງທຶນເພື່ອການຄົ້ນຄວ້າ ແລະ ພັດທະນາທີ່ສະອາດ ແມ່ນເຫັນໃນປະເທດໄທ ເຊິ່ງໃນເດືອນ ພະຈິກ 2020, ຄະນະກໍາມະການສົ່ງເສີມການລົງທຶນໄດ້ອະນຸມັດໂຄງການມູນຄ່າຫຼາຍກວ່າ 1 ຕື້ ໂດລາສະຫະລັດ ເຊິ່ງກວມເອົາຕ່ອງໂສ້ການສະໜອງ, ການຄົ້ນຄວ້າ ແລະ ການພັດທະນາລົດໄຟຟ້າ;
- ສິ່ງຈູງໃຈໃຫ້ນໍາໃຊ້ເຄື່ອງໃຊ້ໄຟຟ້າສະອາດ ແລະ ປະຫຍັດພະລັງງານ ດັ່ງທີ່ເຫັນໃນປະເທດສິງກະໂປ ທີ່ລັດຖະບານໄດ້ມອບບັດຄູປອງຄົວເຮືອນສໍາລັບເຄື່ອງໃຊ້ໄຟຟ້າທີ່ປະຫຍັດພະລັງງານງານ ແລະ ປະຫຍັດນໍ້າ ເຊັ່ນ: ຕູ້ເຢັນທີ່ເປັນມິດຕໍ່ສິ່ງແວດລ້ອມ, ຝັກບົວແບບປະຫຍັດນໍ້າ ແລະ ດອກໄຟ LED;
- ສະໜັບສະໜູນການຍົກລະດັບອາຄານ ແລະທີ່ຢູ່ອາໄສສີຂຽວ ເຊັ່ນ: ປະເທດສິງກະໂປ ທີ່ລັດຖະບານວາງແຜນຈະຍົກລະດັບປະສິດທິພາບດ້ານພະລັງງານຂັ້ນຕໍ່າສຸດຂອງອາຄານໃໝ່ ແລະ ອາຄານທີ່ມີຢູ່ແລ້ວ ພ້ອມທັງຮັບປະກັນວ່າອາຄານໃນສິງກະໂປຢ່າງໜ້ອຍ ໘໐% ຈະເປັນສີຂຽວພາຍໃນປີ ໒໐໓໐;[2]
- ການລົງທຶນໃສ່ພື້ນຖານໂຄງລ່າງທາງທໍາມະຊາດ ແລະ ພື້ນທີ່ສີຂຽວ ເຊັ່ນ: ໃນປະເທດສິງກະໂປ ທີ່ລັດຖະບານໄດ້ທຸ້ມເທຊັບພະຍາກອນເພື່ອປັບປຸງພູມສັນຖານທໍາມະຊາດຂອງປະເທດ.

ເຖິງຢ່າງໃດກໍຕາມ, ນະໂຍບາຍເຫຼົ່ານີ້ຖືກທໍາລາຍຢ່າງຮຸນແຮງໂດຍຫຼາຍຢ່າງທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ. ຕົວຢ່າງ: ເງິນກູ້ທີ່ບໍ່ມີເງື່ອນໄຂສີຂຽວສໍາລັບທຸລະກິດປ່ອຍອາຍພິດເຮືອນແກ້ວ ສູງເຖິງ ໕໐ ລ້ານໂດລາ ສະຫະລັດ ໃນປະເທດ ອິນໂດເນເຊຍ,ມາເລເຊຍ, ຟີລິບປິນ ແລະ ສິງກະໂປ.[໓] ເງິນອຸດໜູນຈາກລັດຖະບານສໍາລັບຜະລິດຕະພັນ ແລະ ອຸດສາຫະກໍາທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມຍັງຕ້ານກັບມາດຕະການທາງບວກທີ່ໄດ້ຈັດຕັ້ງປະຕິບັດ. ຍົກຕົວຢ່າງ, ລັດຖະບານມາເລເຊຍໄດ້ຍົກເວັ້ນການເສຍພາສີ ການຂາຍລົດໃຫຍ່ທີ່ຜະລິດໃນຢູ່ພາຍໃນປະເທດ, ຊຸກຍູ້ໃຫ້ລົດທີ່ມີມົນລະພິດສູງຂຶ້ນໂດຍອີງໃສ່ການປ່ອຍອາຍພິດເຮືອນແກ້ວ.[໔] ນອກຈາກນີ້, ຍັງບໍ່ພົບຫຼັກຖານຂອງການຝຶກອົບຮົມພະນັກງານສີຂຽວ ແລະ ມາດຕະການສ້າງວຽກເຮັດງານທໍາໃນໄລຍະການແຜ່ລະບາດຂອງພະຍາດ, ເຊິ່ງເປັນການກົດຂວາງຄວາມສາມາດຂອງພາກພື້ນໃນການກ້າວໄປສູ່ເສດຖະກິດສີຂຽວຢ່າງໄວ.

ໃນບັນດາປະເທດທີ່ເປັນສູນກາງ, ສິງກະໂປມີມາດຕະການຟື້ນຟູຫຼາຍທີ່ສຸດໃນພາກສ່ວນຕ່າງໆ ທີ່ສະໜັບສະໜູນການຟື້ນຟູສີຂຽວ, ໃນຂະນະທີ່ປະເທດອິນໂດເນເຊຍ ແລະ ຟີລິບປິນມີມາດຕະການຟື້ນຟູທີ່ຄັດຄ້ານກັນຫຼາຍທີ່ສຸດ.

2 "ສີຂຽວ" ໃນຕົວຢ່າງນີ້ແມ່ນໝາຍເຖິງອາຄານຕາມຂໍ້ກໍານົດດ້ານປະສິດທິພາບພະລັງງານຂັ້ນຕໍ່າທີ່ກໍານົດໂດຍໜ່ວຍງານອາຄານ ແລະ ການກໍ່ສ້າງ ແລະ ສະພາອາຄານສີຂຽວແຫ່ງ ສິງປະໂປ ໃນແຜນແມ່ບົດອາຄານສີຂຽວຂອງສິງກະໂປ. ເບິ່ງເພີ່ມເຕີມໄດ້ທີ່: https://www1.bca.gov.sg/buildsg/sustainability/green-building-masterplans.

3 ADB. (26 ເມສາ 2021).ຖານຂໍ້ມູນນະໂຍບາຍພະຍາດໂຄວິດ 19 ຂອງ ADB . ຂໍ້ມູນຄັດໄລ່ຈາກ 01 – ການສະໜັບສະໜູນສະພາບຄ່ອງ ແລະ 04 – ການສະໜັບສະໜູນທຶນໃນປະເທດ ອິນໂດເນເຊຍ, ມາເລເຊຍ, ຟີລິປິນ ແລະ ສິງກະໂປ. https://covid19policy.adb.org/policy-measures.

4 Justin Lim. (ມີນາ 2021). ສະມາຄົມລົດຍົນມາເລເຊຍກ່າວວ່າ ຍັງບໍ່ມີແຜນທີ່ຈະຍື່ນຂໍຍົກເວັ້ນພາສີການຂາຍ. ຕະຫຼາດ Edge. https://www.theedgemarkets.com/article/malaysian-automotive-association-says-has-not-planned-apply-sales-tax-exemption-extension.

ສິ່ງທ້າທາຍທີ່ສຳຄັນຢູ່ໃນພາກພື້ນໃນການເປີດການຟື້ນຟູ ສີຂຽວ ປະກອບມີ ກອບການຈັດຕັ້ງປະຕິບັດຂອງອີງການທີ່ອ່ອນແອຕໍ່ກັບການປ່ຽນແປງຂອງດິນຟ້າອາກາດ, ຂໍ້ຈຳກັດດ້ານຊັບພະຍາກອນ ແລະ ການຂາດຄວາມໂປ່ງໃສຂອງຂໍ້ມູນ ແລະ ການຮ່ວມມືລະຫວ່າງບັນດາຂະແໜງການ.

ເພື່ອກ້າວໄປທາງໜ້າ, ການຈັດຕັ້ງປະຕິບັດຕໍ່ວຽກງານດ້ານນິຕິກຳຂອງສະມາຊິກສະພາ (ສສຊ) ຈະມີຜົນກະທົບໄລຍະຍາວຢ່າງຫຼວງຫຼາຍຕໍ່ເສດຖະກິດ ແລະ ສິ່ງແວດລ້ອມ. ໃນສະພາບການດັ່ງກ່າວ, ບັນດາສະມາຊິກສະພາມີບົດບາດສຳຄັນເພື່ອສົ່ງເສີມການຟື້ນຟູສີຂຽວ. ດ້ວຍອຳນາດທາງນິຕິບັນຍັດ, ການຕິດຕາມກວດກາດ້ານງົບປະມານ ແລະ ອຳນາດຕາມລັດຖະທຳມະນູນ ສະມາຊິກສະພາເປັນຫົວໃຈສຳຄັນຂອງການປະຕິບັດຄຳໝັ້ນສັນຍາການປ່ຽນແປງຂອງດິນຟ້າອາກາດເຊິ່ງກຳນົດຮູບແບບຊີວິດການເປັນຢູ່ຂອງປະຊາຊົນ. ຜູ້ແທນຍັງສາມາດມີບົດບາດພິເສດໃນການເຮັດໃຫ້ພາກພື້ນຖືກ "ສ້າງຄືນໃຫ້ດີກວ່າເກົ່າ" ດ້ວຍການ:

- ຮຽກຮ້ອງໃຫ້ບັນດາລັດຖະບານນຳສົ່ງບັນດາເປົ້າໝາຍ NDC ທີ່ມີຄວາມຄາດຫວັງສູງໃຫ້ແກ່ ສັນຍາປາຣີ ແລະ ຮັບຜິດຊອບຕໍ່ກັບບັນດາເປົ້າຫມາຍທີ່ມີຢູ່ແລ້ວ ໂດຍຮຽກຮ້ອງໃຫ້ມີການປັບປຸງຄວາມຄືບຫນ້າຢ່າງເປັນປົກກະຕິ;
- ການນຳໃຊ້ຖະແຫລງການ APHR, ບົດລາຍງານນີ້ ແລະ ບັນດາເອກກະສານອື່ນໆທີ່ກ່ຽວຂ້ອງ ເພື່ອສົ່ງເສີມການຮັບຮອງເອົາບັນດານະໂຍບາຍການຟື້ນຟູສີຂຽວທີ່ໄດ້ກຳນົດໄວ້ມາໃຊ້;
- ຈັດສັນງົບປະມານຕາມລຳດັບບູລິມະສິດກ່ຽວກັບພະລັງງາທົດແທນ, ການຂົນສົ່ງສາທາລະນະ, ປະສິດທິພາບທາງດ້ານພະລັງງານ, ພາຫະນະນຳໃຊ້ພະລັງງານໄຟຟ້າ ແລະ ບັນດາຂົງເຂດສຳຄັນອື່ນໆທີ່ສະໜັບສະໜູນການຫັນປ່ຽນທາງດ້ານເສດຖະກິດທີ່ມີທາດກາກບອນຕໍ່າ;
- ສົ່ງເສີມການລົງທຶນໃສ່ພື້ນຖານໂຄງລ່າງທຳມະຊາດ ແລະ ພື້ນທີ່ສີຂຽວ ໃນລະຫວ່າງການອະພິປາຍເລື່ອງງົບປະມານ ເພື່ອຫຼີກລ້ຽງຄວາມເສຍຫາຍທີ່ອາດຈະເກີດຂຶ້ນຈາກໄພພິບັດທີ່ມາຈາກການປ່ຽນແປງສະພາບດິນຟ້າອາກາດ, ຕົວຢ່າງເຊັ່ນ: ນ້ຳຖ້ວມ;
- ຮັບປະກັນການປະເມີນຜົນກະທົບທາງຕໍ່ສັງຄົມ ແລະ ສິ່ງແວດລ້ອມ ສຳລັບທຸກໆໂຄງການຟື້ນຟູ ໂດຍມີການປຶກສາຫາລືກັບປະຊາຊົນ ກ່ອນຕັດສິນໃຈອະນຸມັດໃນກອງປະຊຸມສະພາແຫ່ງຊາດ;
- ເວົ້າເຖິງຄວາມເປັນຫ່ວງຕໍ່ກັບສິ່ງແວດລ້ອມ ແລະ ສິດທິມະນຸດ ໃນການພັດທະນາຖ່ານຫີນ ແລະ ບັນດານະໂຍບາຍທີ່ເປັນອັນຕະລາຍຕໍ່ກັບສິ່ງແວດລ້ອມ, ເຊິ່ງອາດຈະເພີ່ມການສູນເສຍ GDP ເພີ່ມຂຶ້ນໃນອານາຄົດ;
- ສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນຢ່າງມີຄວາມຫມາຍ ແລະ ສິດໃນການມີສ່ວນຮ່ວມດ້ານສິ່ງແວດລ້ອມ ເພື່ອຮັບປະກັນການຟື້ນຟູສີຂຽວ ທີ່ສະໜັບສະໜູນສິດທິມະນຸດຂອງສ່ວນບຸກຄົນ;
- ການສ້າງກອບວຽກລະດັບຊາດກ່ຽວກັບການປ່ຽນແປງຂອງດິນຟ້າອາກາດທີ່ສອດຄ່ອງກັບສັນຍາປາຣີ ເພື່ອປັບປຸງຄວາມສົມບູນລະຫວ່າງນິຕິກຳດ້ານສິ່ງແວດລ້ອມ ແລະ ດ້ານເສດຖະກິດຂອງຊາດ ພ້ອມທັງສ້າງຄວາມເຂັ້ມແຂງໃນການຕິດຕາມກວດກາຂໍ້ຜູກພັນລະດັບຊາດ ແລະ ລະດັບສາກົນ;
- ຈັດກອງປະຊຸມຮ່ວມກັບບັນດາຜູ້ມີສິດເລືອກຕັ້ງ ເພື່ອສ້າງຄວາມເຂົ້າໃຈບັນຫາສະພາບການປ່ຽນແປງຂອງດິນຟ້າອາກາດທີ່ເປັນບັນຫາເລັ່ງດ່ວນ ພ້ອມຍົກບັນຫາເຫລົ່ານີ້ຂຶ້ນສະເຫນີຕໍ່ລັດຖະບານ;
- ໂດຍການນຳໃຊ້ບັນດາກຳມາທິການຕ່າງໆໃນສະພາ ແລະ ການປະຊຸມເພື່ອຊີ້ແຈງ ແນໃສ່ແກ້ໄຂບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ຮຽກຮ້ອງເອົາຂໍ້ມູນຈາກຜູ້ຈັດຕັ້ງປະຕິບັດ ຫຼື ພາກສ່ວນອື່ນ ທີ່ບໍ່ແມ່ນລັດຖະບານເຊັ່ນ: ບັນດາກຸ່ມຄົນໃນສັງຄົມ ເພື່ອເຮັດແຜນຟື້ນຟຸ.

# “ການສ້າງຄືນໃຫ້ດີກວ່າເກົ່າ” ການຫັນປ່ຽນຂອງອາຊີຕາເວັນອອກສ່ຽງໃຕ້ໄປສູ່ເສດຖະກິດສີຂຽວພາຍຫຼັງໝົດພະຍາດອັກເສບປອດສາຍພັນໃໝ່ (COVID-19)

## ການປະເມີນ ແລະ ບາງຂໍ້ສະເໜີແນະນໍາສໍາລັບສະມາຊິກສະພາ

Hanns Seidel Foundation

APHR ASEAN PARLIAMENTARIANS FOR HUMAN RIGHTS